ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
-----===== xxxx =====-----

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 0332/ອຄ.ຄພນ
ນະຄອນຫຼວງວຽງຈັນ, ວັນທີ 15 FEB 2010

# ຄຳສັ່ງແນະນຳ

**ເຖິງ :** ຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າບັນດາແຂວງ ແລະ ນະຄອນຫຼວງໃນທົ່ວປະເທດ.

**ເລື່ອງ :** ໃຫ້ເພີ່ມທະວີຄວາມເອົາໃຈໃສ່ ໃນການຕິດຕາມ, ກວດກາ, ແກ້ໄຂ ກ່ຽວກັບສະພາບການປັ່ນປ່ວນ, ກັກຕຸນ ແລະສວຍໂອກາດ ຂຶ້ນລາຄາສິນຄ້າໃນທຸກສະຖານະການລວມທັງ ໃນເຫດສະການຕ່າງໆ ຢ່າງເຂັ້ມງວດ.

- ອີງຕາມດຳລັດ ສະບັບເລກທີ 206/ນຍ, ລົງວັນທີ 10/10/2001, ວ່າດ້ວຍທຸລະກິດຈຳໜ່າຍສິນຄ້າ.
- ອີງຕາມດຳລັດ ສະບັບເລກທີ 207/ນຍ, ລົງວັນທີ 11/10/2001, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ.
- ອີງຕາມຄຳສັ່ງແນະນຳ ສະບັບເລກທີ 334/ກຄ.ພນ, ລົງວັນທີ 22/5/2002, ວ່າດ້ວຍການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາ.

ໃນປະຈຸບັນສະພາບການປັ່ນປ່ວນຂອງເສດຖະກິດໂລກ ແລະພາກພື້ນມີການຜັນແປຢ່າງຕໍ່ເນື່ອງ, ຊຶ່ງໄດ້ຮັບຜົນກະທົບຈາກວິກິດການເງິນໂລກ, ເງິນໂດລາສະຫາລັດອ່ອນຄ່າລົງເນື່ອງຫຼຸບໃສ່ສະກຸນເງິນຂອງແຕ່ລະປະເທດ, ໃນນັ້ນຫຼຸບໃສ່ເງິນກີບກໍ່ຄືກັນ ແລະເພື່ອເປັນການຮອງຮັບເຫດສະການງານບຸນຕ່າງໆຕາມປະເພນີ, ແນໃສ່ຫຼີກເວັ້ນບໍ່ໃຫ້ມີການສວຍໂອກາດກັກຕຸນສິນຄ້າ ເພື່ອຂຶ້ນລາຄາ, ເຮັດໃຫ້ສະພາບການປັ່ນປ່ວນເພື່ອຫາຜົນປະໂຫຍດໂດຍບໍ່ເປັນທຳ ຊຶ່ງຈະນຳໄປເຖິງເຮັດໃຫ້ເກີດມີສະພາບການຂາດແຄນສິນຄ້າດັ່ງທີ່ເຄີຍມີມາແລ້ວນັ້ນ.

## ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະການຄ້າ ອອກຄຳສັ່ງແນະນຳດັ່ງນີ້ :

1- ແຕ່ງຕັ້ງພະນັກງານຂອງຕົນ ລົງຕິດຕາມສະພາບການເໜັງຕີງ ຂອງລາຄາສິນຄ້າ ຕາມຫ້າງຮ້ານແລະຕະຫຼາດທົ່ວໄປເປັນປະຈຳໃນແຕ່ລະມື້ ,ໂດຍການປະສານສົມທົບກັບຈັດສັນຕະຫຼາດ, ສ່ວຍສາອາກອນ, ຕຳຫຼວດເສດຖະກິດ ແລະອຳນາດການປົກຄອງທີ່ກ່ຽວຂ້ອງ ເພື່ອເກັບກຳສະພາບສິນຄ້າ,

ລາຄາ, ປະລິມານຄວາມຕ້ອງການ ແລະການຈຳໜ່າຍໃນແຕ່ລະວັນຢ່າງໃກ້ຊິດ.

2- ສິນຄ້າທີ່ລັດຄຸ້ມຄອງ 30 ລາຍການນັ້ນ, ກ່ອນຈະຂຶ້ນລາຄາຕ້ອງໄດ້ຮັບອະນຸຍາດຈາກລັດເສຽກ່ອນ (ກະຊວງອຸດສາຫະກຳ ແລະການຄ້າ, ພະແນກອຸດສາຫະກຳ ແລະການຄ້າແຂວງແລະນະຄອນຫຼວງ) ພ້ອມນັ້ນກໍຊີ້ນຳຈັດສັນຕະຫຼາດໃຫ້ລະດົມບັນດາຊາວຄ້າຂາຍເອົາໃຈໃສ່ປະຕິບັດ ຕິດປ້າຍລາຄາສິນຄ້າທີ່ຕົນວາງຈຳໜ່າຍໃຫ້ທົ່ວເຖິງຢ່າງມີມາດຕະການ.

3- ບັນດາບໍລິສັດ, ຫ້າງຮ້ານ, ໂຮງງານ ທັງພາກລັດແລະເອກະຊົນ ນັບທັງປະຊາຊົນຜູ້ເຮັດການຜະລິດຕ້ອງສະໜອງສິນຄ້າທີ່ຕົນມີຢູ່ ເຂົ້າສູ່ຕະຫຼາດບໍ່ໃຫ້ຂາດ ໂດຍສະເພາະແມ່ນສິນຄ້າສະບຽງອາຫານ, ເຄື່ອງໃຊ້ສອຍປະຈຳວັນ ແລະ ອື່ນໆຢ່າງປົກກະຕິ.

4- ຫ້າມບໍ່ໃຫ້ບຸກຄົນ ຫຼື ນິຕິບຸກຄົນໃດໜຶ່ງສວຍໂອກາດ ຖືເອົາສະພາບການເໜັງຕີງຂອງລາຄາສິນຄ້າໃດໜຶ່ງໃນປະຈຸບັນມາເປັນຂໍ້ອ້າງ ໃນການກັກຕູນສິນຄ້າເພື່ອຂຶ້ນລາຄາຕາມໃຈໂດຍເດັດຂາດ.

5- ຖ້າພົບ ຫຼືຮູ້ເຫັນບຸກຄົນ ຫຼືນິຕິບຸກຄົນໃດ ມີເຈຕະນາລ່ວງລະເມີດລະບຽບການ, ສວຍໂອກາດຂຶ້ນລາຄາ, ກັກຕູນສິນຄ້າ, ໂຄສະນາບິດເບືອນ ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ ແມ່ນໃຫ້ສຶກສາອົບຮົມ ຕັກເຕືອນໃນຄັ້ງທຳອິດ; ຖ້າຍັງບໍ່ປ່ຽນແປງກໍໃຫ້ໃຊ້ມາດຕະການທາງເສດຖະກິດ ແລະຖ້າຫາກຍັງບໍ່ປ່ຽນແປງອີກໃນຄັ້ງທີສາມ ກໍໃຫ້ປະຕິບັດມາດຕະການຕາມກົດໝາຍວິສາຫະກິດ ແລະຕາມມາດຕະການໃນກົດໝາຍອາຍາ ສະບັບປັບປຸງເລກທີ 12/ສພຊ, ລົງວັນທີ 10/11/2005, ໃນມາດຕາ 147, 149, 150 ແລະມາດຕາອື່ນໆທີ່ກ່ຽວຂ້ອງທັນທີ.

6- ໃຫ້ພະແນກອຸດສາຫະກຳ ແລະການຄ້າແຂວງ ແລະນະຄອນຫຼວງ ໃນທົ່ວປະເທດເປັນເຈົ້າການໃນການຈັດຕັ້ງປະຕິບັດ ແລ້ວລາຍງານສະພາບການຈັດຕັ້ງປະຕິບັດດັ່ງກ່າວ ໃຫ້ກະຊວງອຸດສາຫະກຳ ແລະການຄ້າຊາບ (ກົມການຄ້າພາຍໃນ) ເປັນປົກກະຕິ ແລະຖ້າຫາກມີສະພາບການຮ້າຍແຮງກໍໃຫ້ຂໍທິດຊີ້ນຳຈາກອຳນາດການປົກຄອງແຂວງ ເພື່ອຊອກວິທີການແກ້ໄຂໃນລະດັບທ້ອງຖິ່ນໃຫ້ທັນກັບສະພາບການ ແລ້ວຈຶ່ງລາຍງານການຈັດຕັ້ງປະຕິບັດດັ່ງກ່າວເຖິງກະຊວງອຸດສາຫະກຳ ແລະການຄ້າຊາບໃນເວລາອັນຄວນ.

7- ກົມການຄ້າພາຍໃນຕິດຕາມ, ສັງລວມສະພາບການ ແລ້ວລາຍງານຂັ້ນເທິງຊາບ ເພື່ອຂໍຊີ້ນຳ ແລະພ້ອມກັນນີ້ກໍໃຫ້ກະກຽມເງື່ອນໄຂໃຫ້ພຽງພໍ ເພື່ອລົງສົມທົບກັບພະແນກອຸດສາຫະກຳ ແລະການຄ້າແຂວງ ແລະນະຄອນຫຼວງໃນທົ່ວປະເທດ ເພື່ອແກ້ໄຂບັນຫາທີ່ອາດຈະເກີດຂຶ້ນ ຖ້າຫາກມີຄວາມຈຳເປັນ.

8- ໃຫ້ປະຕິບັດມາດຕະການໃນການຍ້ອງຍໍຕໍ່ພະນັກງານຜູ້ທີ່ຫ້າວຫັນ ດີເດັ່ນ ໃນການປະຕິບັດໜ້າທີ່ວຽກງານຢ່າງເໝາະສົມ ແລະທັງປະຕິບັດມາດຕະການໃນການຍ້ອງຍໍຕາມເງື່ອນໄຂ ຕໍ່ຊາວຄ້າຂາຍຜູ້ທີ່ປະຕິບັດຕາມລະບຽບການວາງອອກໄດ້ດີ; ພ້ອມນັ້ນ ກໍໃຫ້ປະຕິບັດລະບຽບວິໄນຕໍ່ລັດຖະກອນຜູ້ກະທຳຜິດຢ່າງເຂັ້ມງວດ ຕາມທີ່ລະບຸໄວ້ໃນລະບຽບລັດຖະກອນ ໃນກໍລະນີກະທຳຄວາມຜິດເຊັ່ນ: ສ້າງຄວາມຫຍຸ້ງຍາກໃຫ້ຜູ້ປະກອບການ, ສວຍໂອກາດນຳໃຊ້ໜ້າທີ່, ຕຳແໜ່ງ ຮຽກຮ້ອງເອົາຜົນປະໂຫຍດໃສ່ຕົນເອງ ໂດຍບໍ່ຊອບທຳ.

9- ເມື່ອໄດ້ຮັບຄຳສັ່ງສະບັບນີ້ແລ້ວ, ໃຫ້ລາຍງານຂໍຄຳເຫັນຈາກຄະນະນຳແຂວງ ແລະນະຄອນ

ຫຼວງ ເພື່ອຊີ້ນຳ ແລະສ້າງແຜນການເຄື່ອນໄຫວການຈັດຕັ້ງປະຕິບັດໃຫ້ເປັນເອກະພາບ ກັບຂະແໜງການອື່ນທີ່ກ່ຽວຂ້ອງເພື່ອເຮັດໃຫ້ວຽກງານໄດ້ຮັບປະສິດທິຜົນສູງສຸດ.

10- ຄຳສັ່ງແນະນຳສະບັບນີ້ ປ່ຽນແທນຄຳສັ່ງແນະນຳສະບັບ ເລກທີ 0096/ອຄ.ຄພນ, ລົງວັນທີ 21 ມັງກອນ 2009.

11- ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ, ແລ້ວລາຍງານຜົນການ ຈັດຕັ້ງປະຕິບັດໃຫ້ກະຊວງຊາບໃນເວລາອັນຄວນ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະການຄ້າ.

ບ່ອນສົ່ງ :
- ຫ້ອງວ່າການສູນກາງພັກ " ເພື່ອລາຍງານ "
- ຄະນະເລຂາທິການລັດຖະບານ " ເພື່ອລາຍງານ "
- ຄະນະນຳກະຊວງອຸດສາຫະກຳ ແລະການຄ້າ " ເພື່ອລາຍງານ "
- ກະຊວງການເງິນ " ເພື່ອຂໍຄວາມຮ່ວມມື "
- ກະຊວງປ້ອງກັນຄວາມສະຫງົບ " ເພື່ອຂໍຄວາມຮ່ວມມື "
- ຫ້ອງການ ກະຊວງ ອຸດສາຫະກຳ ແລະການຄ້າ " ເພື່ອລາຍງານ "
- ສຳເນົາ

ກະຊວງອຸດສາຫະກຳ ແລະການຄ້າ
ລັດຖະມົນຕີ

ດຣ. ນາມ ວິຍະເກດ